ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກກະລາດ ປະຊາທິປະໄຕ ເອກກະພາບ ວັດທະນາຖາວອນ

ອົງການກາແດງລາວ

ສູນບໍລິຈາກເລືອດ

**ສະຫລຸບ ລາຍງານ ການຈັດສະເຫລີມສະຫລອງ**

**ວັນຜູ້ບໍລິຈາກເລືອດໂລກ 14 ມີຖຸນາ 2007**

1. **<u>ສະພາບລວມ</u>:**

ການຈັດສະເຫລີມສະຫລອງ ວັນຜູ້ບໍລິຈາກເລືອດໂລກ ໄດ້ຖືກຈັດຂຶ້ນ ໃນວັນທີ 14 ມີຖຸນາ 2007, ທີ່ ຫໍວັດທະນະທຳ ແຫ່ງຊາດ ໂດຍມີຜູ້ເຂົ້າຮ່ວມ ລວມທັງຫມົດ ປະມານ 1.300 ຄົນ ຊຶ່ງມາຈາກພາກສ່ວນ ຕ່າງໆ ໃນນະຄອນຫລວງວຽງຈັນ ແລະ 13 ແຂວງ ທີ່ເຄື່ອນໄຫວວຽກງານ ການປຸກລະດົມບໍລິຈາກເລືອດ.

**ຈຸດປະສົງແມ່ນ**: - ເພື່ອ ໃຫ້ກຽດ ແລະສະແດງຄວາມຂອບອົກຂອບໃຈ ຕໍ່ຜູ້ບໍລິຈາກເລືອດແບບສະຫມັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນ ໃນໄລຍະຜ່ານມາ.

- ເພື່ອ ຍ້ອງຍໍຊົມເຊີຍ ຜູ້ບໍລິຈາກເລືອດຫລາຍເທື່ອ ຢ່າງຕໍ່ເນື່ອງ ໃນໄລຍະ 3 ປີ (2004-2006).
- ເພື່ອ ຈັດຕັ້ງຮັບບໍລິຈາກເລືອດ ແບບເປີດກວ້າງ ໃຫ້ໂອກາດແກ່ມວນຊົນ ທົ່ວໄປ ໄດ້ບໍລິຈາກເລືອດ ໃນວັນຜູ້ບໍລິຈາກເລືອດໂລກ.
- ເພື່ອ ປະກອບສ່ວນ ເຂົ້າໃນຂະບວນການໂລກ ກ່ຽວກັບການບໍລິຈາກເລືອດ.

**ຂະບວນການສຳຄັນ ໃນການສະເຫລີມສະຫລອງ ແມ່ນເນັ້ນໃສ່ ດັ່ງຕໍ່ໄປນີ້**:

- ສ້າງຈິດສຳນຶກ ກ່ຽວກັບຄວາມສຳຄັນ ແລະຄວາມຈຳເປັນ ໃນການບໍລິຈາກເລືອດ ເພື່ອຊ່ວຍຊີວິດມະນຸດດ້ວຍກັນ.
- ສະແດງຄວາມຂອບອົກຂອບໃຈ, ໃຫ້ກຽດ ແລະຍ້ອງຍໍຊົມເຊີຍຜູ້ບໍລິຈາກເລືອດ.
- ປຸກລະດົມການບໍລິຈາກເລືອດ.
- ລະດົມສື່ມວນຊົນ ແລະພາກສ່ວນເອກກະຊົນ ເຂົ້າຮ່ວມ ສົ່ງເສີມວຽກງານ ການບໍລິຈາກເລືອດ.
- ສ້າງຄູ່ຮ່ວມງານ ເພື່ອມີສ່ວນຮ່ວມ ໃນການປຸກລະດົມຂົນຂວາຍ ການບໍລິຈາກເລືອດ.

ງົບປະມານ ການໃຊ້ຈ່າຍ ທັງຫມົດ, ສ່ວນຫນຶ່ງ ແມ່ນມາຈາກ ອົງການກາແດງລາວ ແລະອີກສ່ວນຫນຶ່ງ ແມ່ນມາຈາກການປຸກລະດົມ ຈາກພາຍນອກ.

2. **ເນື້ອໃນການສະເຫລີມສະຫລອງ**:

**ມີດັ່ງນີ້**: - ຈັດຕັ້ງ ປຸກລະດົມບໍລິຈາກເລືອດ ແລະຮັບບໍລິຈາກເລືອດ.

- ຈັດຊຸມນຸມມິດຕິງ ຜ່ານການຖ່າຍທອດສົດ ທາງໂທລະພາບ.
- ຍ້ອງຍໍຊົມເຊີຍ ຜູ້ບໍລິຈາກເລືອດ ຫລາຍເທື່ອ ຢ່າງຕໍ່ເນື່ອງ ໄລຍະ 3 ປີ (2004-2006).
- ຊອກແຫລ່ງທຶນ ສະຫນັບສະຫນູນ ຈາກພາຍນອກ.
- ສະແດງ ສິນລະປະ ວັນນະຄະດີ.

**3. ຜົນຂອງການສະເຫລີມສະຫລອງ**:

**3.1 ກ່ຽວກັບການຈັດຕັ້ງ ປຸກລະດົມການບໍລິຈາກເລືອດ ແລະຮັບບໍລິຈາກເລືອດ**:

- ບັນດາສື່ຕ່າງໆ ເປັນຕົ້ນຫນັງສືພິມ, ວິທະຍຸ ແລະໂທລະພາບ ໄດ້ແຈ້ງຂ່າວ ກ່ຽວກັບການເຊີນຊວນ ບໍລິຈາກເລືອດ.
- ປ້າຍຄໍາຂັວນ ວັນຜູ້ບໍລິຈາກເລືອດໂລກ ໄດ້ກາງຂຶ້ນ ຢູ່ຕາມຖະຫນົນສໍາຄັນ ແລະຫໍວັດທະນະທໍາ ແຫ່ງຊາດ. ສໍາລັບ ຕ່າງແຂວງ ແມ່ນໄດ້ຮັບແຂວງລະປ້າຍ.
- ປ້າຍເຊີນຊວນ ການບໍລິຈາກເລືອດ ຈໍານວນ 2 ປ້າຍ ໄດ້ຖືກກາງໄວ້ ຢູ່ຕາມສາຍທາງ.
- ແຈ້ງການເຊີນຊວນ ກຸ່ມເປົ້າຫມາຍບໍລິຈາກເລືອດ ໄດ້ຖືກສົ່ງຫາພາກສ່ວນຕ່າງໆ ເພື່ອມາບໍລິຈາກເລືອດ ແລະເຂົ້າຮ່ວມຊຸມນຸມມິດຕິງ ເປັນຕົ້ນ ໂຮງຮຽນ ວິທະຍາການສາທາລະນະສຸກ, ມະຫາວິທະຍາໄລ ແຫ່ງຊາດ, ໂຮງຮຽນແພດ ກອງທັບ ແລະອື່ນໆ.
- ຮັບບໍລິຈາກເລືອດ ໄດ້ທັງຫມົດ 331 ຖົງ.
- ແຜ່ນກະດານຢາງ ລົງລາຍເຊັນ ຈັດວາງໄວ້ ໄດ້ຖືກເຊັນຈົນເຕັມໄປຫມົດ.
- ກິດຈະກໍາຕ່າງໆ ຂອງກອງອື່ນໆ ໃນອົງການກາແດງລາວ ໄດ້ຖືກວາງສະແດງ.
- ພິເສດ Website ອົງການກາແດງລາວ ກໍໄດ້ເອົາມາເປີດສະແດງ ໃນວັນງານ.

**3.2 ກ່ຽວກັບການຊຸມນຸມມິດຕິງ**:

- ພິທີທາງການ ໄດ້ເລີ່ມຂຶ້ນ ໃນເວລາ 13:30 ຜ່ານການຖ່າຍທອດສົດ ທາງໂທລະພາບ.
- ເຂົ້າຮ່ວມ ເປັນກຽດ ເປັນຄະນະປະທານ ມີ:



- ທ່ານ. ສະຫມານ ວິຍະເກດ ກໍາມະການກົມການເມືອງ, ປະທານ ກິດຕິມະສັກ, ອົງການກາແດງລາວ.
- ທ່ານ ດຣ. ຄໍາຜາຍ ລັດສະຫມີ, ຮອງ ປະທານ ຄະນະກໍາມະການສົ່ງເສີມການບໍລິຈາກເລືອດ- ສົ່ງເລືອດ ແຫ່ງຊາດ.

- ທ່ານ ດຣ. ສມິວຸຣັຊ ສຣະມານີ, ປະທານ ອົງການກາແດງລາວ, ທັງເປັນ ຮອງປະທານ ຄະນະກຳມະການສົ່ງເສີມການບໍລິຈາກເລືອດ-ສິ່ງເລືອດ ແຫ່ງຊາດ.
- ພຣະອາຈານໃຫຍ່ ບົວຄຳ ບຸບຜະວົງ, ປະທານ ອພສ ນະຄອນຫລວງ.
- ທ່ານ ອາຈານ ບຸນເຕີມ ສີບຸນເຮືອງ, ຜູ້ບໍລິຈາກເລືອດ ຫລາຍເທື່ອ.
- ທ່ານ ດຣ. ດົງອິນອານ (Dong il AHN), ຜູ້ຕາງໜ້າ ອົງການອະນາໄມໂລກ ປະຈຳລາວ.
- ທ່ານ ການນາ ບາຣັນ (Kanna Baran), ຕາງໜ້າໃຫ້ແກ່ ສະຫະພັນກາແດງ ປະຈຳພາກພື້ນ.
- ທ່ານ ຕຣິຊິດ ບີວັສ ( Trishit Biwas ), ຕາງໜ້າໃຫ້ແກ່ ຄະນະຜູ້ແທນກຳມະການກາແດງສາກົນ ປະຈຳບາງກອກ.

**ໝາຍເຫດ**: ທ່ານ ດຣ. ປອນເມກ ດາລາລອຍ, ລັດຖະມົນຕີ ກະຊວງ ສາທາລະນະສຸກ, ປະທານ ຄະນະກຳມະການສົ່ງເສີມການບໍລິຈາກເລືອດ-ສິ່ງເລືອດ ແຫ່ງຊາດ ຕິດທຸລະ ຢູ່ພື້ນຖານ ບໍ່ສາມາດເຂົ້າຮ່ວມໄດ້, ຈຶ່ງມອບໃຫ້ ດຣ. ຄຳຜາຍ ລັດສະໝີ ເຂົ້າຮ່ວມ ແລະກ່າວບົດປາໃສແທນ.

- ພິທີທາງການ ໄດ້ເລີ້ມຂຶ້ນໂດຍ ທ່ານ ຫົວໜ້າອຳນວຍການ ສູນບໍລິຈາກເລືອດ ແຫ່ງຊາດ, ໃນນາມ ຄະນະຈັດຕັ້ງພິທີ,



ກ່າວຈຸດປະສົງ ກ່ຽວກັບງານຈັດໂຮມຊຸມນຸມມິດຕິງ (ຈຸດຫລັກ) ແມ່ນເພື່ອສະເຫລີມ ສະຫລອງ ວັນຜູ້ບໍລິຈາກເລືອດໂລກ 14 ມິຖຸນາ ເພື່ອເປັນການໃຫ້ກຽດ ແກ່ຜູ້ບໍລິຈາກເລືອດທັງຫລາຍ, ເພື່ອຍ້ອງຍໍຊົມເຊີຍ ແລະສະແດງຄວາມ ຂອບອົກຂອບໃຈ ຕໍ່ຜູ້ທີ່ມີຄຸນງາມຄວາມດີ ໃນການບໍລິຈາກເລືອດ ເພື່ອຊ່ວຍຊີວິດຄົນອື່ນ, ແລະສະເໜີແຂກ ໃນຄະນະປະທານ ແລະແຂກທົ່ວໄປ ທີ່ເຂົ້າຮ່ວມໃນງານ.

- ທ່ານ ດຣ. ຄຳຜາຍ ລັດສະໝີ, ກ່າວບົດປາໃສ ກ່ຽວກັບ ວັນຜູ້ບໍລິຈາກເລືອດໂລກ ແກ່ທີ່ຊຸມນຸມ. (ບົດປາໃສ ຕິດຂັດມາພ້ອມ).



**3.3 ກ່ຽວກັບການຍ້ອງຍໍ/ຊົມເຊີຍ**:

- **ດ້ານການບໍລິຈາກເລືອດ**:



- ໄດ້ຮັບຫລຽນກາແຮງງານ ຈຳນວນ 8 ທ່ານ.
- ໄດ້ຮັບໃບຍ້ອງຍໍ ລັດຖະບານ ສຳລັບການຈັດຕັ້ງ ລວມໝູ່ 5 ແຫ່ງ ແລະບຸກຄົນ 5 ທ່ານ.

ໃຫ້ກຽດ ພິທີປະດັບ ແລະມອບ ແມ່ນ ທ່ານ. ສະໝານ ວິຍະເກດ.



- ໄດ້ຮັບໃບອຸປະກາລະຄຸນ ແລະໃບຍ້ອງຍໍ ຈາກ ຄສລ :  ແບບບຸກຄົນ 78 ທ່ານ ແລະ ແບບລວມໝູ່ 62 ແຫ່ງ ໃຫ້ກຽດມອບແມ່ນ ທ່ານ ດຣ. ຄຳຜາຍ ລັດສະໝີ.





- ໄດ້ຮັບໃບອຸປະກາລະຄຸນ ແລະໃບຍ້ອງຍໍ ຈາກ ອົງການກາແດງລາວ: ແບບບຸກຄົນ 547 ທ່ານ ແລະ ແບບລວມໝູ່ 40 ແຫ່ງ. ໃຫ້ກຽດມອບ ແມ່ນ ທ່ານ ດຣ. ສມິວຸຣັຊ ສຣະມານີ.

- **ດ້ານການປຸກລະດົມຂົນຂວາຍ**:
  - 175 ທ່ານ ໄດ້ຮັບໃບຍ້ອງຍໍ ຈາກ ອົງການກາແດງລາວ, ມອບໃຫ້ໂດຍ ທ່ານ ປະທານ ອົງການກາແດງລາວ.
- ຕາງໜ້າ ຜູ້ບໍລິຈາກເລືອດ 2 ທ່ານ ໄດ້ຂຶ້ນປະກອບຄຳຄິດເຫັນ ເຖິງຄວາມໝາຍ ຄວາມສຳຄັນ ແລະ ຄວາມຈຳເປັນ ໃນການບໍລິຈາກເລືອດ ຄື ນາງ ຈັນສະໄໝ ມະນີວົງ ແລະ ທ້າວ ອະດິສັກ ສີລາວົງ.



- ຕາງໜ້າ ຄົນເຈັບທີ່ຮັບເລືອດ 1 ທ່ານ ຄື ທ່ານ ອາຈານ ວິລະພັນ ສອນພຣະຈັນ ໄດ້ກ່າວສະແດງ ຄວາມຂອບໃຈ ມາຍັງຜູ້ບໍລິຈາກເລືອດ ທັງຫລາຍທີ່ໄດ້ຊ່ວຍປະຄັບປະຄອງ ຊີວິດຂອງລາວໄວ້ຈົນມາເຖິງປັດຈຸບັນ.



- ພິທີທາງການ ໄດ້ສິ້ນສຸດລົງ ໃນເວລາປະມານ 3:40 ໂມງ, ທ່ານກາງການກ່າວສະແດງ ຄວາມຂອບອີກຂອບໃຈ ແລະຄຳອວຍພອນ ໃຫ້ແກ່ ຄະນະປະທານ, ແຂກທີ່ເຂົ້າຮ່ວມ ແລະຜູ້ບໍລິຈາກເລືອດ ທັງຫລາຍ.



- ສຸດທ້າຍ ຄະນະປະທານໄດ້ຖ່າຍຮູບລວມກັບຜູ້ບໍລິຈາກເລືອດ ທີ່ຂຶ້ນກ່າວຄວາມຮູ້ສຶກ.

**3.4 ການສະແດງ ສິນລະປະວັນນະຄະດີ:**



ຄະນະສິນລະປະກອງທັບ ໄດ້ເລີ້ມຕົ້ນສະແດງ



ໂດຍມີການຮ້ອງເພງ ວັນຜູ້ບໍລິຈາກເລືອດໂລກ

ແລະ ຢອດເລືອດສີແດງ ຊຶ່ງແມ່ນ ນັກຮ້ອງຕົ້ນສະບັບ ຈາກ ທ່າແຂກ ເປັນຜູ້ຂັບຮ້ອງ. ຈາກນັ້ນ ກໍສະຫລັບກັນດ້ວຍການລໍາ ແລະສະແດງບົດຟ້ອນຕ່າງໆ.



ພິເສດ ຍັງມີນ້ອງ - ເຢົາວະຊົນທີ່ຮຽນເກັ່ງ ແລະຈະໄປທັດສະນະສຶກສາ ຢູ່ປະເທດ ຍີ່ປຸ່ນ ໄດ້ສະແດງ ບົດຟ້ອນນໍາດ້ວຍ.



**3.5 ການລະດົມແຫລ່ງທຶນ:**

ຫນັງສືຂໍລະດົມທຶນ ໄດ້ຖືກສົ່ງເຖິງການຈັດຕັ້ງ ແລະບໍລິສັດ ຫ້າງຮ້ານ ຈໍານວນ 26 ບ່ອນ.

ມີທັງຫມົດ 15 ແຫ່ງ ທີ່ໄດ້ໃຫ້ການຕອບຮັບ ສະຫນັບສະຫນູນ ເປັນວັດຖຸ ແລະເງິນດັ່ງນີ້:

| ລ/ດ | ຊື່ການຈັດຕັ້ງ | ມູນຄ່າລວມ (ກີບ) |
|---|---|---|
| 1 | ອົງການອະນາໄມໂລກ. | 28.500.000 |
| 2 | ບໍລິສັດ ເບຍລາວ. | 10.500.000 |
| 3 | ລັດວິສະຫະກິດ ປະສົມ ລາວໂທລະຄົມ. | 5.600.000 |
| 4 | ທະນາຄານ ພົງສະຫວັນ. | 3.000.000 |
| 5 | ບໍລິສັດ ກິໂກະ ແລະ ແບດສະເລ. | 2.880.000 |
| 6 | ບໍລິສັດ SPP ການພິມ ແລະ ປ້າຍ. | 2.000.000 |
| 7 | ບໍລິສັດ ເທບສີເມືອງ ການຄ້າ ຈໍາກັດ. | 1.620.000 |
| 8 | ບໍລິສັດ ໂທລະຄົມລາວ. | 1.000.000 |
| 9 | ໂຮງແຮມ ອິນທະປັນຍາ. | 1.000.000 |
| 10 | ກາແດງ ຝຣັ່ງ. | 585.000 |

| | | |
|---|---|---|
| 11 | ບໍລິສັດ ລາວເວີລ ຈຳກັດ. | 500.000 |
| 12 | ກາແດງ ເດນຫມາກ | 500.000 |
| 13 | ໂຮງພິມ ສະຫວ່າງ. | 300.000 |
| 14 | ໂຮງພິມ ແຫ່ງລັດ. | 200.000 |
| 15 | ຮ້ານ ເພັດ ໄຊສິງຄາມ. | 192.000 |
| 16 | ກາແດງ ເນເທີແລນ. | 150.000 |
| 17 | ຊ່ຽວຊານໜ່ວຍງານພັດທະນາອົງການ | 950.000 |
| **ລວມ :** | | **59.477.000 ກີບ** |

**4. ສັງລວມ**:

**4.1 ຈຸດດີ**:

- ງານສະເຫລີມສະຫລອງ ໄດ້ຖືກຈັດຂື້ນ ຕາມວັນເວລາ ທີ່ຄາດຫມາຍ ແລະໄດ້ຖືກດຳເນີນໄປຕາມແຜນ ທີ່ວາງໄວ້ ແລະຈົບລົງ ດ້ວຍຄວາມເປັນລະບຽບຮຽບຮ້ອຍດີ.
- ຈຳນວນຜູ້ຖືກເຊີນ ໄດ້ເຂົ້າຮ່ວມ ຢ່າງຫລວງຫລາຍ ຕາມຄາດຫມາຍທີ່ວາງໄວ້.
- ໄດ້ຮັບເລືອດ ບໍລິຈາກທັງຫມົດ ຈາກມວນຊົນ ທັງພາຍໃນ ແລະສາກົນ ຈຳນວນ 331 ຖົງ.
- ບັນຍາກາດ ການສະເຫລີມສະຫລອງ ມີລັກສະນະຄຶກຄື້ນ, ອົບອຸ່ນ, ປະທັບໃຈ, ງາມຕາ ແລະເຊີນຊວນ.
- ການນຳ ລະດັບສູງ ແລະສາກົນ ໃຫ້ກຽດ ເຂົ້າຮ່ວມ ຕາມຄຳເຊີນ.

**4.2 ສາຍເຫດ**:

- ຍ້ອນມີ ແນວທາງນະໂຍບາຍ ວ່າດ້ວຍ ການສົ່ງເສີມການບໍລິຈາກເລືອດ ທີ່ຖືກຕ້ອງ.
- ຍ້ອນການເອົາໃຈໃສ່ ຊີ້ນຳ ນຳພາ ແລະຄວາມເປັນຫ່ວງເປັນໃຍ ຂອງການນຳລະດັບສູງ.
- ຍ້ອນຄວາມຕັດສິນໃຈສູງ ຂອງ ຄະນະກຳມະການສົ່ງເສີມການບໍລິຈາກເລືອດ-ສົ່ງເລືອດ ເວົ້າລວມ, ເວົ້າສະເພາະ ກໍແມ່ນ ອົງການກາແດງລາວ ແລະ ສູນບໍລິຈາກເລືອດ ແຫ່ງຊາດ ຕໍ່ການຈັດງານ ສະເຫລີມສະຫລອງ ດັ່ງກ່າວ.
- ຍ້ອນຄວາມສາມັກຄີ ເປັນປຶກແຜ່ນ ແລະຄວາມເອົາໃຈໃສ່ ຂອງສູນບໍລິຈາກເລືອດ ໃນນາມກອງເລຂາ ຄສລ, ກ້າຄິດ, ກ້າທຳ, ກ້າຕັດສິນໃຈ ແລະເຮັດວຽກຢ່າງຫ້າວຫັນ ບໍ່ຮູ້ອິດຮູ້ເມື່ອຍ ຕາມໜ້າທີ່ ທີ່ຖືກ ມອບຫມາຍ.
- ຍ້ອນວ່າ ຜູ້ບໍລິຈາກເລືອດ ກໍຄື ມວນຊົນທົ່ວໄປ ມີຈິດສຳນຶກ ກ່ຽວກັບການບໍລິຈາກເລືອດ ຊ່ວຍຊີວິດ ແລະຫລັ່ງໄຫລ ມາຮ່ວມງານ ແລະມາບໍລິຈາກເລືອດ ຢ່າງຄຶກຄື້ນ.
- ຍ້ອນ ການສະຫນັບສະຫນູນ ອຸ້ມຊູ ທາງດ້ານການເງິນ ກໍຄື ວັດຖຸ ຈາກການຈັດຕັ້ງ ຕ່າງໆ ແລະບໍລິສັດ ຫ້າງຮ້ານ ຈຳນວນຫນຶ່ງ.
- ມີການວາງແຜນ ແລະການຈັດຕັ້ງແບ່ງງານ.

4.3 ຈຸດອ່ອນ:

- ປະທານ ຄສລ ບໍ່ໄດ້ ໃຫ້ກຽດ ເຂົ້າຮ່ວມ ຕາມຄຳເຊີນ.
- ການກະກຽມ ຍັງບໍ່ທັນດີ ເທົ່າທີ່ຄວນ.
- ການຈັດແບ່ງຄົນເຂົ້າໃນແຕ່ລະງານ ຍັງບໍ່ທັນເຫມາະສົມ, ຜູ້ດຽວເຮັດຫລາຍໜ້າທີ່.
- ຈັດຮັບບໍລິຈາກເລືອດ ບໍ່ທັນການ ແລະບໍ່ເປັນລະບຽບດີ, ຜູ້ບໍລິຈາກເລືອດ ອັ່ງອໍຫລາຍ, ບໍ່ມີບ່ອນນັ່ງລໍຖ້າ ແລະມີການຈົ່ມວ່າ.
- ການລົງທະບຽນ ຈຳນວນຫນຶ່ງ ມີການຜິດພາດ, ບາໂກດ ບໍ່ພໍ, ນໍ້າເບີຕິດເສື້ອ ບໍ່ພໍ.
- ໄລຍະເວລາການຍ້ອງຍໍ ແກ່ຍາວ, ສັບສົນ, ເຮັດໃຫ້ເວທີເຫງົາ ແລະຜູ້ເຂົ້າຮ່ວມ ຈຳນວນຫນຶ່ງ ອອກເມືອກ່ອນຈົບພິທີ. ການສັບປ່ຽນ ໃບຍ້ອງຍໍຊົມເຊີຍ ກໍບໍ່ເປັນລະບຽບ.
- ການຖ່າຍທອດສົດ ແລະການບັນທຶກລາຍການ ບໍ່ສຸດກົກສຸດປາຍ.
- ທ້າງຫາອາຫານສວາຍ ບໍ່ພຽງພໍ.
- ເຊີນຜູ້ເຂົ້າຮ່ວມ ຂາດຜູ້ຮ່ວມງານ ດ້ານການປິ່ນປົວ.
- ການເກັບກຳຂໍ້ມູນ ຜູ້ບໍລິຈາກເລືອດ ຫລາຍເທື່ອ ແລະການຈັດຕັ້ງ ທີ່ເດັ່ນ ໃນການບໍລິຈາກເລືອດ ມີຈຳນວນຫນ້ອຍຫນຶ່ງ ຖືກຫລົງລືມ.
- ບໍ່ສາມາດ ລົງທະບຽນ ຈຳນວນຜູ້ເຂົ້າຮ່ວມໄດ້. ບໍ່ສາມາດສົ່ງບັດເຊີນ ເຖິງຜູ້ບໍລິຈາກເລືອດທີ່ຢູ່ບ້ານ ໄດ້ຢ່າງທົ່ວເຖິງ.

**4.4 ສາຍເຫດ**:

- ຄະນະຮັບຜິດຊອບລວມ ຊີ້ນຳ ບໍ່ພຽງພໍ.
- ປະທານ ຄສລ ຕິດທຸລະ ທາງອື່ນ.
- ໄລຍະເວລາກະກຽມ ສັ້ນໂພດ.
- ຈຳນວນ ພະນັກງານ ເຮັດວຽກມີຈຳກັດ.
- ປະເມີນ ຈຳນວນ ຜູ້ຈະມາບໍລິຈາກເລືອດ ຜິດພາດ.
- ສະຖານທີ່ ຮັບບໍລິຈາກເລືອດ ຄັບແຄບ ແລະສິ່ງອຳນວຍຄວາມສະດວກບໍ່ພຽງພໍ.
- ບໍ່ໄດ້ຈັດຄະນະຮັບຜິດຊອບ ປະຊາສຳພັນບ່ອນ ຮັບບໍລິຈາກເລືອດ.
- ກຳນົດ ອາຫານໃສ່ຈຳນວນຜູ້ຈະກິນ ບໍ່ໄປນຳກັນ. ຈຳນວນຜູ້ກິນ ຫລາຍກວ່າ ອາຫານ ທີ່ທ້າງຫາໄວ້.
- ຜູ້ຮັບ ໃບຍ້ອງຍໍຊົມເຊີຍ ຈຳນວນຫນຶ່ງ ບໍ່ມາຕາມຄຳເຊີນ. ຈຳນວນຜູ້ຖືກຍ້ອງຍໍມີຫລາຍ.
- ຜູ້ກຳກັບ ດ້ານໂທລະພາບ ແລະ ການຖ່າຍພາບບັນທຶກ ບໍ່ເອົາໃຈໃສ່ເທົ່າທີ່ຄວນ.

**5. ບາງບົດຮຽນທີ່ຄວນຖອດຖອນ**:

- ຄະນະຮັບຜິດຊອບລວມ ຄວນຕິດຕາມຊີ້ນຳ ໃຫ້ຫລາຍກວ່າເກົ່າ.
- ເວລາ ຄວນຫລາຍກວ່ານີ້.
- ຈຳນວນຄົນ ກໍຫລາຍກວ່ານີ້.
- ການແບ່ງງານ ຄວນລະອຽດກວ່ານີ້ ( Right job, right person)
- ຂໍ້ມູນ ຜູ້ບໍລິຈາກເລືອດ ຄວນເຮັດເປັນລາຍປີ ຫລືບໍ່ ຄວນສ້າງເປັນ database ໄວ້.

- ເລືອກສະຖານທີ່ເຫມາະສົມ ແລະຈັດສັນໃຫ້ດີກວ່ານີ້, ມີສິ່ງອໍານວຍຄວາມສະດວກກວ່ານີ້ ສໍາລັບ ວັນບໍລິຈາກເລືອດ.
- ກະກຽມ ຮັບບໍລິຈາກເລືອດ ໃຫ້ເຫມາະສົມກວ່າເກົ່າ, ເຊີນກຸ່ມເປົ້າຫມາຍ ໃນໂມງທີ່ແຕກຕ່າງກັນ.
- ລ້ຽງອາຫານ ເຫັນວ່າ ຫລາຍໂພດ.
- ພິທີມອບ ແມ່ນຄວນເລືອກເຟັ້ນເອົາ ເພື່ອຫຍໍ້ເວລາ.
- ໃຫ້ເວລາ ຜູ້ບໍລິຈາກເລືອດ ໄດ້ປະກອບຄໍາເຫັນ.
- ຈັດໃຫ້ມີປະຊາສໍາພັນ ຢູ່ຕະຫລອດ.
- ສັນຍາ ກັບ ໂທລະພາບ ຕ້ອງເຂັ້ມງວດ ກວ່າເກົ່າ.